ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ 528 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2015

## ຂໍ້ຕົກລົງ

## ກ່ຽວກັບອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສ ປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມການຕົກລົງຂອງກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 16 ກໍລະກົດ 2015;
- ອີງຕາມການຄົ້ນຄວ້າ ແລະ ນໍາສະເໜີຂອງກົມກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

ມາດຕາ 1: ກໍານົດອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ໃນອັດຕາ 4,5% ຕໍ່ປີ, 7 ວັນ ຫາ 14 ວັນ ໃນອັດຕາ 5,625% ຕໍ່ປີ ແລະ ເກີນ 14 ວັນ ແຕ່ບໍ່ເກີນ 1 ປີ ໃນອັດຕາ 11,25% ຕໍ່ປີ.

ມາດຕາ 2: ມອບໃຫ້ກົມບໍລິການ, ບັນດາສາຂາ ທຫລ, ບັນດາທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວຢ່າງເຂັ້ມງວດ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບ 733/ ທຫລ ລົງວັນທີ 17 ກັນຍາ 2010 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ. ລາວ

ຜູ້ວ່າການ

ດຣ. ສົມພາວ ໄຟສິດ

---